- ຫ່ນ ສຸລີສັກ ... 
- PA ປະມາດ
7/4 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 14 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 03 APR 2015

# ລາຍງານການເຄື່ອນໄຫວປະຈຳອາທິດ ທີ 23/03/2015 ຫາ 27/03/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນຈຳນວນຜູ້ຂໍຮັບສະຫວັດດີການວ່າງງານໃນຮອບ 2 ອາທິດ ຮອດວັນທີ 14/3/2015 ເພີ່ມຂຶ້ນ 2.000 ຄົນ ຈາກ 289.000 ຄົນ ມາເປັນ 291.000 ຄົນ. ໃນຂະນະທີ່, ຕົວເລກເສດຖະກິດຂອງປະເທດໃນຂົງເຂດເອີຣົບອອກມາດີ ເປັນຕົ້ນແມ່ນດັດຊະນີຄວາມເຊື່ອໝັ້ນທາງທຸລະກິດຂອງເຢຍລະມັນ ເພີ່ມຂຶ້ນຈາກ 106,8 ໃນເດືອນ 2/2015 ເປັນ 107,9 ໃນເດືອນ 3/2015. ສ່ວນເງິນບາດແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາ ຍ້ອນນັກລົງທຶນເຊື່ອໝັ້ນໃນເສດຖະກິດຂອງປະເທດໄທ ພາຍຫຼັງທະນາຄານເພື່ອການພັດທະນາອາຊີ (ADB) ປະເມີນເສດຖະກິດໄທຈະຂະຫຍາຍຕົວ 3,6% ໃນປີ 2015 ເນື່ອງຈາກບັນຫາການເມືອງໄດ້ສະຫງົບລົງ ບວກກັບເງິນທຶນໄຫຼເຂົ້າຕະຫຼາດພັນທະບັດໄທ ຈຳນວນ 3,24 ຕື້ລ້ານບາດ ແລະ ຕະຫຼາດຫຸ້ນຈຳນວນ 442 ລ້ານບາດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 17/03/2015 | ອາທິດນີ້ 24/03/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,0579 | 1,0941 | -3,30% |
| ໂດລາ/ເຢນ | 121,36 | 119,65 | 1,43% |
| ໂດລາ/ບາດ | 32,91 | 32,53 | 1,16% |
| ໂດລາ/ເປໂຊ | 44,47 | 44,69 | -0,49% |
| ໂດລາ/ຣູເປັຍ | 13.194,67 | 12.949,33 | 1,89% |
| ໂດລາ/ໂດລາສິງກະໂປ | 1,3892 | 1,3669 | 1,63% |
| ໂດລາ/ຢວນ | 6,2533 | 6,2076 | 0,74% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 5,70% ຈາກ 49,95 ໂດລາ/ບາເຣວ ມາເປັນ 47,10 ໂດລາ/ບາເຣວ ພາຍຫຼັງລັດຖະມົນຕີວ່າການກະຊວງພະລັງງານຂອງຄູເວດເປີດເຜີຍວ່າປະເທດໃນກຸ່ມໂອເປັກຈະຮັກສາກຳລັງການຜະລິດນ້ຳມັນໄວ້ຢູ່ລະດັບເກົ່າ;

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 2,26% ຈາກ 1.161,95 ໂດລາ/ອອນ ມາເປັນ 1.188,17 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລຈາກຄວາມຜັນຜວນຂອງເສດຖະກິດໂລກ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,35% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,14% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດ ອ່ອນຄ່າລົງ 1,14% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,73% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,28% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,10% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,33% ສຳລັບອັດຕາ ທຫກ ແຕ່ແຂງຄ່າຂຶ້ນ 0,18% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 17/03/2015 | | | ອາທິດນີ້ 24/03/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.106,97 | 8.136,87 | 8.128,71 | 8.088,81 | 8.114,29 | 8.100,71 | 0,22% | 0,28% | 0,35% |
| ບາດ | 248,59 | 266,53 | 248,23 | 250,41 | 251,48 | 251,10 | -0,73% | 5,99% | -1,14% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.113,62 | 8.148,40 | 8.131,01 | 8.103,78 | 8.134,67 | 8.119,23 | 0,121% | 0,17% | 0,14% |
| ບາດ | 248,68 | 249,97 | 249,32 | 250,54 | 251,77 | 251,15 | -0,75% | -0,71% | -0,73% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,08% | 0,14% | 0,03% | 0,19% | 0,25% | 0,23% | | | |
| ບາດ | 0,03% | -6,22% | 0,44% | 0,05% | 0,12% | 0,02% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 0,72% ທຽບໃສ່ວັນທີ 20/03/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 46,12%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 1,58% ເມື່ອທຽບໃສ່ວັນທີ 20/03/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,80%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 24/03/2015) ເຫັນວ່າ ທຫກ ຊື້ໂດລາສຸດທິ 14,20 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 60,96 ລ້ານໂດລາ ແລະ ຂາຍໂດລາໄດ້ 46,76 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.182,27 ລ້ານບາດ (ໃນນີ້ ຊື້ບາດໄດ້ 403,35 ລ້ານບາດ ແລະ ຂາຍບາດໄດ້ 1.585,62 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 1,36% ແລະ ເພີ່ມຂຶ້ນ 15,14% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 10,51 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 389,29 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 19,18 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 511,50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 44,80 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 1.464,00 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 17/03/2015 | | ອາທິດທີ 24/03/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 20,44 | 197,36 | 20,14 | 207,54 | -1,44% | 5,16% |
| - ທ/ຄທຸລະກິດອື່ນໆ | 37,17 | 244,35 | 40,82 | 195,81 | 9,82% | -19,86% |
| ລວມຊື້: | 57,61 | 441,71 | 60,96 | 403,35 | 5,82% | -8,68% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 23,92 | 250,85 | 21,66 | 231,62 | -9,44% | -7,66% |
| - ທ/ຄທຸລະກິດອື່ນໆ | 24,75 | 1.034,83 | 25,10 | 1.354,00 | 1,41% | 30,84% |
| ລວມຂາຍ: | 48,67 | 1.285,67 | 46,76 | 1.585,62 | -3,92% | 23,33% |
| ຊື້-ຂາຍສຸດທິ ທທກ | 8,94 | -843,96 | 14,20 | -1.182,27 | 58,89% | 40,09% |
| ຜົດດ່ຽງ ຊື້-ຂາຍ | 15,51 | -191,07 | 23,29 | -293,12 | 778,01% | -102,73% |
| ມູນຄ່າການຊື້-ຂາຍ | 106,28 | 1.727,38 | 107,72 | 1.988,97 | 1,36% | 15,14% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 15,20 | 60,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,55 | 240,00 | 19,18 | 511,50 | | |
| ຊື້-ຂາຍສຸດທິ ທຫລ | 6,65 | -180,00 | -19,18 | -511,50 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 13,57 | 392,85 | 10,51 | 389,29 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,24 | 691,55 | 0,09 | 1.464,06 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 20,79 | 34,00 | 44,89 | 0,06 | | |
| ຊື້-ຂາຍສຸດທິ ທຫລ | -20,55 | 657,55 | -44,80 | 1.464,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 03/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,17% ຫລຸດລົງ 0,24% ຈາກ 1,41% ໃນເດືອນ 02/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 97,95 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 179,7% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 779 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 102,86% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 476,68 ຕື້ກີບ ເພີ່ມຂຶ້ນ 96,26% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (20-26/03/2015) ມີຈໍານວນ 1.323 ຄັ້ງ ໂດຍມີມູນຄ່າ 231,04 ຕື້ກີບ ຫຼຸດລົງ 36,02% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 409 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.475,09 ຈຸດ ເພີ່ມຂຶ້ນ 2,05% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 579.464 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,20 ຕື້ກີບ ເພີ່ມຂຶ້ນ 189,83% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 48,48% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.000 ກີບ/ຮຸ້ນ ຫຼຸດລົງ 174 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 74.102 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 518,71 ລ້ານກີບ ເພີ່ມຂຶ້ນ 55,01% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 39,73% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນຢູ່ທີ່ 9,56%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.358 ກີບ/ຮຸ້ນ ເພີ່ມຂຶ້ນ 6 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 495.098 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,64 ຕື້ກີບ ເພີ່ມຂຶ້ນ 236,37% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງ ທຶນຕ່າງປະເທດສະເລ່ຍກວມເອົາ 40,99% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 9.400 ກີບ/ຮຸ້ນ ໂດຍໃນອາທິດນີ້ ແມ່ນບໍ່ມີການຈັບຄູ່ຊື້-ຂາຍຂອງຮຸ້ນດັ່ງກ່າວ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.900 ກີບ/ຮຸ້ນ ເພີ່ມຂຶ້ນ 7 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10.264 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 40,02 ລ້ານກີບ ເພີ່ມຂຶ້ນ 28,46% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງ ທຶນຕ່າງປະເທດສະເລ່ຍກວມເອົາ 20,26% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,73%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການປະຊຸມປຶກສາຫາລື ກັບບັນດາກົມກ່ຽວຂ້ອງ ແລະ ສາຂາ ກ່ຽວກັບແຜນ ລາຍຮັບ-ລາຍຈ່າຍ ແລະ ແຜນການກໍ່ສ້າງພື້ນຖານປະຈໍາປີ 2015;
- ສໍາເລັດການເຜີຍແຜ່ກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໂຮງແຮມ ເມີກຽວ;
- ສໍາເລັດການ ເຊັນບົດບັນທຶກຄວາມເຂົ້າໃຈລະຫວ່າງ ໜ່ວຍງານຕ້ານການຟອກເງິນຂອງລາວ ກັບ ໜ່ວຍງານຕ້ານການຟອກເງິນປະເທດກໍາປູເຈຍ ແລະ ສໍາເລັດການຈັດກອງປະຊຸມສໍາມະນາ ແລກປ່ຽນປະສົບການກ່ຽວກັບວຽກງານ AML/CFT ເຊິ່ງກັນ ແລະ ກັນ;
- ສໍາເລັດການອອກຂໍ້ຕົກລົງ ໃນການຍຸບເລີກການເຄື່ອນໄຫວດໍາເນີນທຸລະກິດຂອງ ສກຈຮ ແສງອາລີ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການຕ້ອນຮັບ: ❶ ສະມາຄົມທະນາຄານແຫ່ງປະເທດໄທ ເຂົ້າຢ້ຽມຢາມຂໍ່ານັບ ທ່ານ ຮອງຜູ້ວ່າການ ທຫລ, ❷ ບໍລິສັດ BS Capital, ປະເທດ ສ. ເກົາຫຼີ ເຂົ້າຢ້ຽມຢາມຂໍ່ານັບ ທ່ານ ຮອງຜູ້ວ່າການ ທຫລ, ❸ ຄະນະຈາກສະຖານທູດອິດສະຕຣາລີ ປະຈຳ ສປປ ລາວ ທີ່ສະເໜີເຂົ້າພົບປະ ແລະ ເຮັດວຽກຮ່ວມກັບ ໜ່ວຍງານຕ້ານການຟອກເງິນ ທີ່ ທຫລ ແລະ ❹ ຕ້ອນຮັບທ່ານ Sanjay Kalra ຜູ້ຕ່າງໜ້າຫ້ອງການ IMF ປະຈຳ ສປປ ລາວ ແລະ ສສ. ຫວຽດນາມ ທີ່ມາເຮັດວຽກຮ່ວມກັບກົມກ່ຽວຂ້ອງຂອງ ທຫລ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ສ້າງລະບົບໂປຣແກຣມ Client Utility ເພື່ອຊ່ວຍບັນດາສະຖາບັນການເງິນຈຸລະພາກໃນການເກັບກຳ ແລະ ລາຍງານຂໍ້ມູນສິນເຊື່ອຕາມ IFF;
- ສືບຕໍ່ກະກຽມຈັດກອງປະຊຸມ: ❶ ກອງປະຊຸມປະກອບຄຳເຫັນ ຕໍ່ຮ່າງແຜນຍຸດທະສາດ ທະນາຄານບ້ານ ຮ່ວມກັບໂຄງການ GIZ-APF, ❷ ກອງປະຊຸມຮ່ວມກັບຊ່ຽວຊານໂຄງການ APF ເພື່ອປຶກສາຫາລື ແລະ ສ້າງຄວາມເປັນເອກະພາບ ຕໍ່ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຄງການ BOL-APF,
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າ ຮ່າງລະບຽບກ່ຽວກັບການຍຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າລະບຽບກ່ຽວກັບການລາຍງານທຸລະກຳເງິນສົດທີ່ມີມູນຄ່າສູງ, ❹ ຄົ້ນຄວ້າລະບຽບກ່ຽວກັບການລາຍງານທຸລະກຳເງິນໂອນພາຍໃນທີ່ມີມູນຄ່າສູງ, ❺ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ພາສີ ພິມມະກອນ